ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກອງທຶນສົ່ງເສີມ ຈນກ

ເລກທີ.058.ທສວ

ນະຄອນຫຼວງວຽງຈັນ, ວັນທີ.06. ພຶດສະພາ 2025

## ໜັງສືແຈ້ງເລື່ອນຍື່ນເຈດຈຳນົງຄວາມສົນໃຈ

## ສະໜອງບໍລິການຄູຝຶກ ພາຍໃຕ້ໂຄງການກໍ່ສ້າງຜູ້ປະກອບກິດຈະການໃໝ່ (New Entrepreneur Creation) ຫົວຂໍ້: ທັກສະໃນການລິເລີ່ມເປັນຜູ້ປະກອບກິດຈະການໃນຍຸກດີຈີຕ້ອນ

1. ກອງທຶນສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ທສວ), ກະຊວງອຸດສາຫະກຳ ແລະ ການຄ້າ ຂໍແຈ້ງເລື່ອນ ຍື່ນໜັງສືເຈດຈຳນົງຄວາມສົນໃຈ ເພື່ອສະໜອງບໍລິການຄູຝຶກ ພາຍໃຕ້ໂຄງການກໍ່ສ້າງຜູ້ປະກອບກິດຈະການໃໝ່ (New Entrepreneur Creation) ຫົວຂໍ້: ທັກສະໃນການລິເລີ່ມເປັນຜູ້ປະກອບກິດຈະການໃນຍຸກດີຈີຕ້ອນ;
2. ສຳລັບໜ້າວຽກທີ່ຈະມອບໝາຍ (TOR) ລາຍລະອຽດ ສາມາດພິມພັນເອົາເອກະສານໄດ້ຢູ່ທີ່ຊັ້ນ 03 ຫ້ອງ 301 ຂອງຫ້ອງການສຳນັກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກຳ ແລະ ການຄ້າ, ເບີໂທ 021 410005, 020 2309 8876, ໃນໂມງລັດຖະການ (8:30 ໂມງ ຫາ 16:00ໂມງ), ວັນຈັນ ເຖິງ ວັນສຸກ;
3. ທສວ ຂໍເຊີນບໍລິສັດທີ່ປຶກສາ ທີ່ມີຄວາມສົນໃຈ ຍື່ນໜັງສືສະແດງຄວາມສົນໃຈຂອງຕົນ ເພື່ອສະໜອງການບໍລິການດັ່ງກ່າວ. ບໍລິສັດທີ່ມີຄວາມສົນໃຈ ຕ້ອງສະໜອງຂໍ້ມູນທີ່ສະແດງເຖິງຄວາມເໝາະສົມໃນການສະໜອງການບໍລິການ ທີ່ມີຄຸນວຸດທິ ແລະ ມີປະສົບການທີ່ກ່ຽວຂ້ອງ ຊຶ່ງປະກອບມີເອກະສານ ດັ່ງລຸ່ມນີ້:
   - ໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ທີ່ຖືກຕ້ອງຕາມກົດໝາຍໃນການດຳເນີນງານ ກ່ຽວກັບການບໍລິການທີ່ປຶກສາ;
   - ໃບຢັ້ງຢືນການເສຍອາກອນ ປະຈຳປີ 2024 ຫຼື 2023;
   - ສະໜອງໂຄງຮ່າງການຈັດຕັ້ງ ແລະ ບັນຊີລາຍຊື່, ຊີວະປະຫວັດຂອງຜູ້ຊ່ຽວຊານ ຫຼື ຫົວໜ້າທີມງານ ແລະ ພະນັກງານຫຼັກ ເພື່ອເປັນຂໍ້ມູນໃນການດຳເນີນຂະບວນການຄັດເລືອກເຂົ້າໃນບັນຊີຄັດເລືອກ (ບັນຊີສັ້ນ).
4. ບໍລິສັດທີ່ປຶກສາຈະຖືກຄັດເລືອກຕາມຮູບແບບຈັດຈ້າງ *[ສະເພາະຄຸນນະພາບ (QBS)]* ຕາມຫຼັກການຈັດຊື້-ຈັດຈ້າງ ສຳລັບງົບປະມານຂອງລັດ ທີ່ກຳນົດໄວ້ໃນຄຳແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
5. ເອກະສານການສະແດງຄວາມສົນໃຈ ຕ້ອງສົ່ງເຖິງທີ່ຢູ່ຂ້າງລຸ່ມນີ້ ແລະ ປິດຮັບເອກະສານສະແດງຄວາມສົນໃຈ ໃນວັນທີ 21 ພຶດສະພາ 2025, ສົ່ງຢູ່ທີ່ຊັ້ນ 03, ຫ້ອງ 301 ຂອງສຳນັກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກຳ ແລະ ການຄ້າ, ເບີໂທ 021 410005 020 2309 8876.

**<u>ໝາຍເຫດ</u>:** ເອກະສານທີ່ຍື່ນຕ້ອງເປັນສະບັບພາສາລາວທັງໝົດ.

**ຜູ້ອຳນວຍການກອງທຶນ**

**ປອ. ບຸນເພັງ ສີບຸນເຮືອງ**